| ເອກະສານຂໍ້ມູນພື້ນຖານໂຄງການ ສະບັບນີ້ແປເປັນພາສາລາວ ອີງຕາມສະບັບພາສາອັງກິດ ລົງວັນທີ ວັນທີ 1 ເມສາ |
|---|

ADB

# ເອກະສານຂໍ້ມູນໂຄງການ

ເອກະສານຂໍ້ມູນໂຄງການແມ່ນໄດ້ປະກອບດ້ວຍຂໍ້ມູນກ່ຽວກັບໂຄງການ ຫລື ແຜນງານຕ່າງໆ: ເນື່ອງຈາກວ່າ ໂຄງການດັ່ງກ່າວນີ້ ແມ່ນກຳລັງໄດ້ຮັບການຈັດຕັ້ງປະຕິບັດຢູ່, ດັ່ງນັ້ນ ມີບາງຂໍ້ມູນອາດຈະບໍ່ໄດ້ກວມລວມເອົາຢູ່ໃນເອກະສານສະບັບທຳອິດນີ້ ແຕ່ຂໍ້ມູນເພີ່ມເຕີມຈະໄດ້ຖືກຕື່ມໃສ່ເອກະສານຂໍ້ມູນໂຄງການດັ່ງກ່າວພາຍຫຼັງທີ່ມີຂໍ້ມູນເພີ່ມຕື່ມ. ຂໍ້ມູນກ່ຽວກັບບັນດາໂຄງການທີ່ໄດ້ຖືກນຳສະເໜີ ແມ່ນກຳລັງຖືກພິຈາລະນາ ແລະ ປະກອບຄຳເຫັນຢູ່.

| | |
|---|---|
| **ວັນທີສ້າງເອກະສານຂໍ້ມູນໂຄງການ** | – |
| **ເອກະສານຂໍ້ມູນໂຄງການໄດ້ຮັບການປັບປຸງໃນວັນທີ** | 29 ມັງກອນ 2013 |

| | |
|---|---|
| **ຊື່ໂຄງການ** | ໂຄງການພັດທະນາຕົວເມືອງຕາມແລວທາງເສດຖະກິດໃນອະນຸພາກພື້ນແມ່ນ້ຳຂອງ |
| **ປະເທດ** | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| **ເລກທີໂຄງການ/ແຜນງານ** | 43319-022 |
| **ສະຖານະພາບ** | ອະນຸມັດແລ້ວ |
| **ສະພາບທີ່ຕັ້ງພູມມີສາດ** | – |

ໃນການກະກຽມແຜນງານ ຫລື ຍຸດທະສາດຢູ່ໃນປະເທດໃດໜຶ່ງ, ການສະໜອງທຶນໃຫ້ແກ່ໂຄງການໃດໜຶ່ງ, ຫລື ການກຳໜົດເອົາ, ຫລືການອ້າງອີງເຖິງ, ເຂດແດນສະເພາະ ຫລື ທີ່ຕັ້ງພູມສັນຖານໃດໜຶ່ງທີ່ໄດ້ລະບຸໃນເອກະສານສະບັບນີ້, ທະນາຄານພັດທະນາອາຊີບໍ່ໄດ້ມີເຈດຕະນາກໍ່ໃຫ້ເກີດການປ່ຽນແປງທາງດ້ານກົດໝາຍ ຫລື ຕໍ່ສະຖານະພາບຂອງເຂດແດນ ຫລື ພື້ນທີ່ໃດໆທັງນັ້ນ.

| | |
|---|---|
| **ການຈັດປະເພດຂະແໜງການ ແລະ/ຫລື ຂະແໜງການຍ່ອຍ** | ຫຼາຍຂະແໜງການ<br>/ ຫຼາຍຂະແໜງການ |
| **ການຈັດປະເພດຫົວຂໍ້ເນື້ອໃນ** | ການຍົກລະດັບຂີດຄວາມສາມາດ<br>ການຂະຫຍາຍຕົວທາງເສດຖະກິດ<br>ຄວາມຍືນຍົງຂອງສິ່ງແວດລ້ອມ<br>ການຮ່ວມມື ແລະການເຊື່ອມໂຍງລະດັບພາກພື້ນ<br>ການຫຼຸດຜ່ອນຄວາມທຸກຍາກແລະການເຕີບໂຕທາງເສເຖະກິດຢ່າງທົ່ວເຖິງ |
| **ໝວດສົ່ງເສີມບົດບາດຍິງຊາຍ** | – |

## ການສະໜອງທຶນ

| ປະເພດ/ ຮູບແບບການຊ່ວຍເຫລືອ | ອະນຸມັດເລກທີ | ແຫລ່ງທຶນ | ຈຳນວນມູນຄ່າອະນຸມັດ (ພັນ) |
|---|---|---|---|
| ທຶນກູ້ຢືມ | 2931 | ກອງທຶນພັດທະນາອາຊີ (ADF) | 26.600 |
| ທຶນຊ່ວຍເຫຼືອລ້າ | 0313 | ກອງທຶນພັດທະນາອາຊີ (ADF) | 14.230 |
| ທຶນຊ່ວຍເຫຼືອລ້າ | 0314 | ກອງທຶນກໍ່ສ້າງພື້ນຖານໂຄງລ່າງສິ່ງແວດລ້ອມພາຍໃນຕົວເມືອງ - UFPF | 638 |
| – | – | ທຶນສົມທົບ | 6.260 |
| ລວມທັງໝົດ | | | **US$ 47.728** |

## ລະດັບຂອງການປົກປ້ອງ

ຂໍ້ມູນເພີ່ມເຕີມກ່ຽວກັບລະດັບຂອງການປົກປ້ອງກະລຸນາເບິ່ງໃນເວັບໄຊ້ http://www.adb.org/site/safeguards/safeguard-categories

ດ້ານສິ່ງແວດລ້ອມ
**B**

ການຍ້າຍຖິ່ນຖານທີ່ບໍ່ແມ່ນຄວາມສະໝັກໃຈ
**B**

ຄົນທ້ອງຖິ່ນ
**C**

## ສະຫລຸບບັນຫາດ້ານສັງຄົມ ແລະ ສິ່ງແວດລ້ອມ

ດ້ານສິ່ງແວດລ້ອມ
–

ການຍ້າຍຖິ່ນຖານທີ່ບໍ່ແມ່ນຄວາມສະໝັກໃຈ
–

ຄົນທ້ອງຖິ່ນ
–

## ສະຫລຸບບັນຫາດ້ານສັງຄົມແລະສິ່ງແວດລ້ອມ

**ດ້ານສິ່ງແວດລ້ອມ**

–

**ການຍ້າຍຖິ່ນຖານທີ່ບໍ່ແມ່ນຄວາມສະໝັກໃຈ**

–

**ຄົນທ້ອງຖິ່ນ**

–

## ການສື່ສານ, ການມີສ່ວນຮ່ວມແລະການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ

**ໃນໄລຍະອອກແບບໂຄງການ**

–

**ໃນໄລຍະຈັດຕັ້ງປະຕິບັດໂຄງການ**

–

## ຂໍ້ມູນໂຄງການ

ໂຄງການນີ້ແມ່ນໂຄງການຄັ້ງທໍາອິດທີ່ມີການໃຫ້ທຶນສະໜັບສະໜູນໃນໄລຍະຍາວສໍາລັບ ການພັດທະນາບັນດາຕົວເມືອງທີ່ຕັ້ງຢູ່ຕາມແລວທາງເສດຖະກິດອະນຸພາກພື້ນລຸ່ມແມ່ນໍ້າຂອງ, ແລະ ທັງເປັນໂຄງການທີ່ສອດຄ່ອງກັບແຜນງານການຮ່ວມມືທາງເສດຖະກິດລະດັບອະນຸພາກພື້ນລຸ່ມແມ່ນໍ້າຂອງ 2012-2020 ທີ່ໄດ້ຖືກອະນຸມັດໃນກອງປະຊຸມສຸດຍອດ GMS ຄັ້ງທີສີ່ ໃນວັນທີ 19 ຫາ 20 ເດືອນ ທັນວາປີ 2011 . ນອກນັ້ນ, ໂຄງການຍັງສອດ-ຄ່ອງກັບແຜນຍຸດທະສາດການຮ່ວມມືກັບປະເທດສໍາລັບສປປ ລາວ ປີ 2012-2016 ແລະ ສະໜັບສະໜູນແຜນດໍາເນີນງານການພັດທະນາຕົວເມືອງ (2012-2020) ແລະ ແຜນປະຕິບັດງານກ່ຽວກັບ ນໍ້າ (2011-2020). ໂຄງ-ການດັ່ງກ່າວນີ້ ຈະຍົກລະດັບຄວາມສາມາດໃນການແຂ່ງຂັນຂອງບັນດາຕົວເມືອງຕາມແລວທາງເສດຖະກິດຕາ-ເວັນອອກຕາເວັນຕົກ (EWEC), ແລະ ສືບຕໍ່ຈັດຕັ້ງປະຕິບັດຂໍ້ຕົກລົງກ່ຽວກັບການສ້າງຄວາມສະດວກດ້ານການຄ້າ ແລະ ການຂະຫຍາຍການຄ້າລະຫວ່າງຊາຍແດນ. ໂຄງການດັ່ງກ່າວຈະທັນປ່ຽນບັນດາຕົວເມືອງຕາມແລວເສດຖະກິດເປັນຕົ້ນ ເມືອງໄກສອນພົມວິຫານ, ເມືອງພີນ, ແດນສະຫວັນ ໃຫ້ກາຍເປັນສູນກາງທາງດ້ານເສດຖະ-ກິດ ໂດຍການປັບປຸງພື້ນຖານໂຄງລ່າງສິ່ງແວດລ້ອມພາຍໃນຕົວເມືອງ ແລະ ການສ້າງຄວາມເຂັ້ມແຂງ ແລະຄວາມອາດສາມາດໃຫ້ອໍານາດການປົກຄອງຂັ້ນແຂວງ ແລະ ທ້ອງຖິ່ນ. ຜະລິດຕະພາບ ແລະ ຄວາມຍືນຍົງຂອງຫົວໜ່ວຍວິສາຫະກິດ ໃນບັນດາຕົວເມືອງເຫຼົ່ານີ້ຈະໄດ້ຮັບການປັບປຸງຢ່າງຫຼວງຫຼາຍ, ໃນຂະນະທີ່ມາດຕະການຄວບຄຸມນໍ້າຖ້ວມ ຈະເພີ່ມທະວີຄວາມຍືດຢຸ່ນທາງສະພາບອາກາດ. ສະພາບແວດລ້ອມດັ່ງກ່າວຈະໄດ້ຮັບການ

ປັບປຸງໂດຍຜ່ານການບຳບັດນ້ຳເປື້ອນໃຫ້ສະອາດ, ການກຳຈັດຂີ້ເຫຍື້ອແລະສິ່ງເສດເຫຼືອຕ່າງໆ, ແລະ ປັບປຸງຖະໜົນຫົນທາງພາຍໃນຕົວເມືອງ. ໂຄງການດັ່ງກ່າວຈະສະໜອງພື້ນຖານໂຄງລ່າງສິ່ງແວດລ້ອມ ແລະ ອື່ນໆທີ່ຈະຊ່ວຍຫຼຸດຜ່ອນການປ່ອຍສານຄາບອນຂອງບັນດາຕົວເມືອງໄດ້, ເຮັດໃຫ້ພວກມັນສະອາດແລະເປັນມິດຕໍ່ສິ່ງແວດລ້ອມ, ແລະ ດັ່ງນັ້ນຈຶ່ງ ເຮັດໃຫ້ຕົວເມືອງມີຄວາມໜ້າຢູ່ອາໄສຫຼາຍຂຶ້ນກວ່າເກົ່າ. ໂຄງການດັ່ງກ່າວນີ້ຈະສະໜອງທຶນສະໜັບສະໜູນ 7 ໂຄງການຍ່ອຍ ທີ່ຢູ່ພາຍໃນ 3 ຕົວເມືອງ.

## ເຫດຜົນອ້າງອີງຂອງໂຄງການ ແລະ ການເຊື່ອມໂຍງເຂົ້າໃນຍຸດທະສາດແຫ່ງຊາດ/ພາກພື້ນ

ການພັດທະນາເສດຖະກິດໃນລະດັບຍຸດທະສາດ. ລັດຖະບານ ແລະ ເອດີບີ ໃຫ້ຄວາມສຳຄັນແລະເນັ້ນໜັກໃສ່ການກຳນົດບຸລິມະສິດດ້ານການສ້າງຖະໜົນຕາມແລວເສດຖະກິດ ເພື່ອເພີ່ມທະວີການເຊື່ອມຕໍ່ທາງກາຍຍະພາບ ລະຫວ່າງ ບັນດາປະເທດລຸ່ມແມ່ນ້ຳຂອງ ແລະ ສ້າງພື້ນຖານສຳລັບການເຄື່ອນໄຫວຂອງປະຊາຊົນ, ສິນຄ້າ, ແລະການບໍລິການໃຫ້ມີປະສິດທິພາບຫຼາຍຂຶ້ນ ກວ່າເກົ່າ. ບັນດາຕົວເມືອງຕາມແລວທາງເສດຖະກິດຕາເວັນອອກຕາເວັນຕົກ (EWEC), ທີ່ເຊື່ອມຕໍ່ປະເທດ ສປປ ລາວ ແລະ ປະເທດຫວຽດນາມກັບປະເທດໄທ ແລະ ປະເທດມຽນມາ, ມີທີ່ຕັ້ງເໝາະສົມ ເພື່ອຮັບໃຊ້ໃຫ້ເປັນສູນກາງນະໂຍບາຍດ້ານການລົງທຶນ ແລະ ການເຕີບໂຕຂອງເສດຖະກິດ. ສະຖານທີ່ຕັ້ງຍຸດທະສາດຂອງບັນດາຕົວເມືອງຕາມແລວເສດຖະກິດ ແມ່ນເປັນປັດໄຈກະຕຸ້ນຊຸກຍູ້ໃຫ້ການຄ້າແລະການລົງທຶນຕາມເສັ້ນທາງການຂົນສົ່ງ ທີ່ມີຈຳນວນເພີ່ມຂຶ້ນ. ການເຂົ້າເຖິງພື້ນຖານໂຄງລ່າງ ແລະ ຕະຫຼາດຈະສະໜອງປັດໄຈກະຕຸກຊຸກຍູ້ຢ່າງຫຼວງຫຼາຍໃຫ້ມີການຂະຫຍາຍຕົວທາງເສດຖະກິດຂອງທ້ອງຖິ່ນ ແລະ ເຂດໃກ້ຄຽງ ກັບບັນດາຕົວເມືອງຕາມແລວເສດຖະກິດ. ຄຽງຄູ່ກັບການຮັບໂອກາດການພັດທະນາ, ແລະ ການຂະຫຍາຍຕົວຢ່າງໄວວາຂອງປະຊາກອນໃນຕົວເມືອງ ແລະ ການຂະຫຍາຍຕົວຂອງເຂດຕົວເມືອງ; ບັນດາຕົວເມືອງແລວເສດຖະກິດໃນປະຈຸບັນກຳລັງປະເຊີນຄວາມຕ້ອງການໂຄງລ່າງພື້ນຖານຕົວເມືອງ ແລະ ການບໍລິການພື້ນຖານທີ່ຈຳເປັນ. ບັນຫາສຳຄັນຕົ້ນຕໍ. ບັນດາຕົວເມືອງຕາມແລວເສດຖະກິດທີ່ເຂົ້າຮ່ວມໂຄງການຢູ່ໃນ ສປປ ລາວ ໃນປະຈຸບັນປະເຊີນກັບວຽກງານໜັກໜ່ວງໃນການຕອບສະໜອງ ຄວາມຕ້ອງການດ້ານການຂະຫຍາຍເສດຖະກິດ ແລະ ຂະຫຍາຍເຂດຕົວເມືອງຢ່າງໄວວາ. ອຳນາດການປົກຄອງທ້ອງຖິ່ນຕ້ອງການວາງແຜນ ແລະ ຄຸ້ມຄອງການຂະຫຍາຍຕົວເມືອງ ໂດຍນຳໃຊ້ເປັນວິທີການແບບປະສົມປະສານ, ປະຕິບັດງານແລະບຳລຸງຮັກສາພື້ນຖານໂຄງລ່າງສິ່ງແວດລ້ອມ ແລະ ເສດຖະກິດໃນຕົວເມືອງ ຄຽງຄູ່ກັບການໃຫ້ບໍລິການຕ່າງໆພາຍໃນເທດສະບານຢ່າງມີປະສິດທິຜົນ. ເຖິງວ່າຈະມີການປະຕິຮູບນະໂຍບາຍເພື່ອສົ່ງເສີມການແບ່ງຂັ້ນຄຸ້ມຄອງ, ຄວາມອາດສາມາດຂອງອົງການຈັດຕັ້ງລະດັບທ້ອງຖິ່ນຍັງບໍ່ທັນຢູ່ໃນລະດັບຈັງຫວະຂອງການພັດທະນາຂະແໜງການໃນຕົວເມືອງ ແລະ ການຂະຫຍາຍຕົວທາງເສດຖະກິດ. ໂດຍມີຈຳນວນການເຄື່ອນໄຫວການຄ້າ ແລະ ການຈະລາຈອນທີ່ຫຼາຍຂຶ້ນ, ຄວາມອາດສາມາດຂອງບັນດາຕົວເມືອງຕາມແລວເສດຖະກິດ ໃນດ້ານການຄຸ້ມຄອງການພັດທະນາເສດຖະກິດທ້ອງຖິ່ນໃນລັກສະນະແບບຍືນຍົງທາງສິ່ງແວດລ້ອມ ຕ້ອງໄດ້ຮັບການຍົກລະດັບຢ່າງຮີບດ່ວນທີ່ສຸດ. ບັນດາຕົວເມືອງຂອງໂຄງການ. ຈຳນວນສາມຕົວເມືອງຕາມແລວທາງເສດຖະກິດຕາເວັນອອກຕາເວັນຕົກ (EWEC) ຖືກຄັດເລືອກເປັນເຂດໂຄງການ ບົນພື້ນຖານຂອງການມີທ່າແຮງທາງເສດຖະກິດ, ພື້ນຖານໂຄງລ່າງຈຳກັດ, ແລະ ຄຳໝັ້ນສັນຍາກ່ຽວກັບການຈັດຕັ້ງປະຕິບັດໂຄງການ. ບັນດາຕົວເມືອງເຫຼົ່ານີ້ມີຄື: ເມືອງໄກສອນພົມວິຫານ, ເມືອງພີນ ແລະ ແດນສະຫວັນ.

## ■ ຜົນກະທົບໂຄງການ

ຕົວເມືອງໄກສອນພົມວິຫານ, ເມືອງພິນ, ແລະແດນສະຫວັນ ຈະກາຍເປັນສູນກາງການຄ້າ ແລະ ການລົງທຶນ ພາຍໃນບັນດາຕົວເມືອງຕາມແລວທາງເສດຖະກິດຕາເວັນອອກຕາເວັນຕົກ (EWEC)

## ■ ຜົນໄດ້ຮັບຂອງໂຄງການ

| ຜົນໄດ້ຮັບລະອຽດ | ຄວາມຄືບໜ້າທີ່ນໍາໄປສູ່ຜົນໄດ້ຮັບ |
|---|---|
| ພື້ນຖານໂຄງລ່າງແລະການບໍລິການທີ່ຈໍາເປັນ ພາຍໃນຕົວເມືອງໄກສອນພົມວິຫານ, ເມືອງພິນ ແລະ ແດນສະຫັວນ ມີຈໍານວນພຽງພໍ | – |

## ■ ຜົນໄດ້ຮັບ ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ

| ລາຍລະອຽດຜົນໄດ້ຮັບຂອງໂຄງການ | ສະຖານະພາບຂອງຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ (ຜົນໄດ້ຮັບ, ກິດຈະກໍາ ແລະ ບັນຫາຕ່າງໆ) |
|---|---|
| 1. ໄດ້ນໍາໃຊ້ແລະຈັດຕັ້ງປະຕິບັດ SLEDP ຢູ່ເມືອງໄກສອນພົມວິຫານ, ເມືອງພິນ ແລະແດນສະຫ້ວນ. 2. ກໍານົດບຸລິມະສິດການລົງທຶນໃສ່ພື້ນຖານໂຄງລ່າງຕົວເມືອງ. 3. ຍົກລະດັບຂີດຄວາມສາມາດຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ | – |
| **ສະຖານະພາບຂອງຈຸດປະສົງການພັດທະນາ** | **ການປ່ຽນແປງພາຍນອກ** |
| – | – |

## ■ ໂອກາດທາງທຸລະກິດ

| | |
|---|---|
| **ວັນທີການບັນທຶກຄັ້ງທໍາອິດ** | 22 ພະຈິກ 2011 |

**ການບໍລິການໃຫ້ຄໍາປຶກສາ**
ວຽກທີ່ປຶກສາທັງໝົດຈະຕ້ອງໄດ້ຮັບການຮັບການຄັດເລືອກແລະບັນຈຸໂດຍສອດຄ່ອງກັບຫຼັກການການນໍາໃຊ້ທີ່ປຶກສາຂອງເອດີບີ (2010). ຂອບເຂດພາລະບົດບາດ ແລະ ໜ້າວຽກຂອງທີ່ປຶກສາໄດ້ນໍາສະເໜີໄວ້ຢູ່ໃນພາກທີ D. ຄາດຄະເນວ່າໂຄງການດັ່ງກ່າວນີ້ຈະຕ້ອງການທີ່ປຶກສາປະມານ 208 ຄົນ/ເດືອນ ໃນນັ້ນລວມມີທີ່ປຶກສາສາກົນຈໍານວນ 84 ຄົນ/ເດືອນ ແລະ ທີ່ປຶກສາພາຍໃນປະເທດຈໍານວນ 124 ຄົນ/ເດືອນ ເພື່ອສະໜອງວິຊາການສະໜັບສະໜູນການຄຸ້ມ

ຄອງບໍລິຫານໂຄງການ ແລະ ພັດທະນາຄວາມອາດສາມາດແລະການຝຶກອົບຮົມ. ນອກນັ້ນ, ຈະມີການເຮັດສັນຍາຈ້າງໂດຍກົງສຳລັບຕຳແໜ່ງທີ່ປຶກສາດ້ານການກວດສອບທາງດ້ານການເງິນ ແລະ ດ້ານການຕິດຕາມກວດກາເອກະລາດກ່ຽວກັບວຽກງານການຈັດຕັ້ງປະຕິບັດຕາມການປົກປ້ອງທາງສັງຄົມ. ອົງການບໍລິຫານໂຄງການ (EA) ແລະ ເອດີບີ ຈະຮ່ວມກັນຄັດເລືອກແລະບັນຈຸບໍລິສັດທີ່ປຶກສາຈະໂດຍນຳໃຊ້ວິທີການຄັດເລືອກແບບເອົາຄຸນນະພາບ ແລະ ຄ່າໃຊ້ຈ່າຍເປັນຫຼັກ (QCBS) ໂດຍມີມາດຖານອັດຕາສ່ວນຄຸນນະພາບຕໍ່ຄ່າໃຊ້ຈ່າຍ 90:10. ການກຳນົດອັດຕາສ່ວນຄຸນນະພາບຕໍ່ຄ່າໃຊ້ຈ່າຍທີ່ສູງນັ້ນຍ້ອນວ່າ ໂຄງການດັ່ງກ່າວນີ້ ເປັນໂຄງການທີ່ມີຄວາມສັບສົນໃນການຈັດຕັ້ງປະຕິບັດ ຊຶ່ງຮຽກຮ້ອງໃຫ້ມີໜ່ວຍງານຄຸ້ມຄອງໂຄງການ (PMU) ແລະ ທີມງານປະຕິບັດໂຄງການຈຳນວນ 3 ທີມ (PIT) ທັງໝົດເຮັດວຽກພາຍໃຕ້ການປະສານງານ ແລະ ຊີ້ນຳຂອງອົງການດຳເນີນໂຄງການ (IA), ຄຽງຄູ່ກັບການເອົາໃຈໃສ່ບັນຫາ ຄວາມສາມາດທີ່ມີຄວາມຈຳກັດຂອງອົງການຈັດຕັ້ງຂັ້ນເມືອງແລະອຳນາດການປົກຄອງຕາມແລວເສດຖະກິດ ໃນການຄຸ້ມຄອງແລະຈັດຕັ້ງປະຕິບັດໂຄງການເງິນກູ້ຢືມພັດທະນາຂະແໜງການຕົວເມືອງ.

**ການຈັດຊື້-ຈັດຈ້າງ**

ທຸກການຈັດຊື້ສິນສິນຄ້າ, ວຽກງານ, ແລະການການບໍລິການໃຫ້ຄຳປຶກສາທັງໝົດຈະຕ້ອງໄດ້ຮັບການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ສອດຄ່ອງລະບຽບຫຼັກການຈັດຊື້ຂອງເອດີບີ. ການປະມູນແຂ່ງຂັນສາກົນ (ICB) ຈະໄດ້ຮັບການນຳໃຊ້ສຳລັບພູດວຽກກໍ່ສ້າງທີ່ມີມູນຄ່າສູງກວ່າຫຼືເທົ່າກັບ $1.500.000. ພາຍໃນເວລາ 1 ປີຫຼັງຈາກໂຄງການກູ້ຢືມຖືກປະກາດໃຫ້ຈັດຕັ້ງປະຕິບັດໄດ້, ອົງການບໍລິຫານໂຄງການ (EA) ຈະຕ້ອງສົ່ງແຜນຈັດຊື້ສະບັບປັບປຸງເຖິງເອດີບີເພື່ອຂໍອະນຸມັດ. ແຜນຈັດຊື້ສະບັບປັບປຸງຈະລະບຸກິດຈະກຳການຈັດຊື້ທັງໝົດທີ່ລັງດຳເນີນການຢູ່ໃນປະຈຸບັນ ແລະ ການຈັດຊື້ທີ່ຈະເກີດຂຶ້ນໃນໄລຍະ 18 ເດືອນຂ້າງໜ້າ. ແຜນຈັດຊື້ດັ່ງກ່າວນີ້ຈະຕ້ອງໄດ້ຮັບການດັດແກ້ປັບປຸງຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ ຫຼື ອີງຕາມຄວາມເໝາະສົມພາຍຫຼັງມີການທົບທວນ ຄືນໂຄງການ ຫຼື ພາຍຫຼັງມີການເຊັນສັນຍາວຽກ ICB ແຕ່ລະພູດວຽກທີ່ມີຂະໜາດໃຫ່ຍ. ໃນກໍລະນີມີການປ່ຽນແປງຢູ່ໃນແຜນຈັດຊື້ຂອງໂຄງການທີ່ກ່ຽວຂ້ອງການແພດມູນຄ່າການຈັດຊື້, ວິທີການຈັດຊື້ ແລະ ຂໍ້ກຳນົດການທົບທວນຄືນ ແລະ ການກຳນົດພູດຂອງການ ຈັດຊື້ໃນໄລຍະການຈັດຕັ້ງປະຕິບັດໂຄງການ, ອົງການບໍລິຫານໂຄງການ (EA) ຈະຕ້ອງນຳສະເໜີ ເຫດຜົນໃນການປ່ຽນແປງ ແລະ ສົ່ງແຜນຈັດຊື້ຂອງໂຄງການເຖິງເອດີບີເພື່ອຂໍອະນຸມັດ. ເອດີບີ ມີໜ້າທີ່ຮັບຜິດຊອບໃນການເຜີຍແຜ່ແຜນຈັດຊື້ເບື້ອງຕົ້ນ ແລະສະບັບປັບປຸງຂອງແຕ່ລະໂຄງການຜ່ານທາງເວັບໄຊ້ຂອງຕົນ. ກໍລະນີດັດແກ້ເນື້ອໃນສັນຍາກໍ່ສ້າງ. ຖ້າຫາມີການດັດແກ້ສັນ ຍາໃດໜຶ່ງ, ຊຶ່ງສົ່ງຜົນໃຫ້ມູນຄ່າລວມຂອງສັນຍາເພີ່ມຂຶ້ນຫຼາຍກ່ວາ 15% ຂອງສັນສະບັບຕົ້ນ, ອົງການບໍລິຫານໂຄງການ (EA) ຈະຕ້ອງນຳສະເໜີເຫດຜົນຢ່າງລະອຽດແລະຂໍອະນຸມັດຈາກເອດີບີ ເພື່ອຮັບຮອງເອົາການປ່ຽນແປງເນື້ອໃນສັນຍາ ຖ້າຫາກວ່າການສະ-ເໜີຂໍປ່ຽນແປງເນື້ອໃນສັນຍາຂັດກັບແຜນຈັດຊື້ ແລະ ເງື່ອນໄຂຂອງຂໍ້ຕົກລົງການໃຫ້ທຶນຊ່ວຍເຫຼືອ, ເອດີບີ ຈະແຈ້ງໃຫ້ EA ຮັບຮູ້ໂດຍທັນທີກ່ຽວກັບຈຸດຢືນຂອງເອດີບີຕໍ່ກັບບັນຫາດັ່ງກ່າວນັ້ນ. EA ຕ້ອງສົ່ງເອກະສານດັດແກ້ທັງໝົດເຖິງ ເອດີບີເພື່ອລົງບັນທຶກທາງດ້ານກົດຫມາຍແລະບັນທຶກເພື່ອຄວາມຈຳ. ມາດຕະການທີ່ຈຳເປັນທີ່ຕິດພັນກັບເງື່ອນໄຂການກະກຽມຄວາມພ້ອມໃຫ້ໂຄງການກ່ອນທີ່ຈະການກູ້ຢືມເງິນ ແລະ ການຊ່ວຍເຫຼືອລ້າ, EA ຈະປະຕິບັດງານລ່ວງຫນ້າກ່ຽວກັບການຈັດຊື້ ແລະຈັດຈ້າງທີ່ປຶກສາ. ສິ່ງນີ້ ມີຈຸດປະສົງເພື່ອອຳນວຍຄວາມສະດວກໃຫ້ການເລີ່ມຕົ້ນໂຄງການ ແລະ ຫຼີກເວັ້ນບໍ່ໃຫ້ໂຄງການພົບ ບັນຫາການຊັກຊ້າໃນການຈັດຕັ້ງປະຕິບັດໂຄງການທີ່ອາດເກີດມາຈາກສາເຫດທີ່ຕິດພັນກັບຄວາມອາດສາມາດ ແລະ ການປະສົບການທີ່ຈຳກັດໃນການຈັດຕັ້ງປະຕິບັດໂຄງການ. ຂັ້ນຕອນການຈັດຊື້-ຈັດຈ້າງລ່ວງຫນ້າຈະຕ້ອງໄດ້ຮັບການດຳເນີນໂດຍສອດຄ່ອງລະ ບຽບຫຼັກການຈັດຊື້-ຈັດຈ້າງຂອງເອດີບີ (ເດືອນເມສາປີ 2010, ແລະຈະຖືກປັບປຸງຕາມແຕ່ໄລຍະເວລາ) ແລະໜັງສືເຊີນມາຢືນຊອງປະມູນລາຄາຈະຕ້ອງໄດ້ຮັບອະນຸມັດຈາກ ເອດີບີ ເສຍກ່ອນຈະສົ່ງອອກພາຍນອກ. ຂອບເຂດວຽກງານຈັດຊື້-ຈັດຈ້າງທີ່ຈະດຳເນີນລ່ວງຫນ້າຈະເນັ້ນໜັກໃສ່ວຽກງານດັ່ງຕໍ່ໄປນີ້: (i) ສັນຍາ

ຈ້າງທີມງານເພື່ອບັນຈຸໃສ່ທີ່ປຶກສາ ການຈັດຕັ້ງປະຕິບັດໂຄງການ (PIS) ແລະວຽກງານຍົກລະດັບຂີດຄວາມອາດສາມາດ, (ii) ວຽກງານອອກແບບວິສະວະກຳຢ່າງລະອຽດ ແລະ ການຊີ້ນຳການກໍ່ສ້າງສຳລັບບູລິມະສິດພັດທະນາຕົວເມືອງທີ່ຖືກກຳນົດໄວ້ແລ້ວໃນໂຄງການຍ່ອຍ. ເອດີບີຈະຄັດເລືອກແລະວ່າຈ້າງທີ່ປຶກສາສ່ວນ ບຸກຄົນເພື່ອໃຫ້ຄວາມຊ່ວຍເຫຼືອໜ່ວຍງານຄຸ້ມຄອງໂຄງການໃນການຄັດເລືອກແລະບຸນຈຸທີ່ປຶກສາຕຳແໜ່ງ PMS.

**ປະກາດການຈັດຊື້ແລະຈັດຈ້າງທີ່ປຶກສາ**

http://www.adb.org/projects/43319-022/business-opportunities

## ຕາຕະລາງເວລາ

| | |
|---|---|
| **ການອະນຸມັດແນວຄວາມຄິດ** | – |
| **ການພິສູດຂໍ້ເທັດຈິງ** | 09 ເມສາ 2012 to 20 ເມສາ 2012 |
| **ກອງປະຊຸມປະເມີນການຄຸ້ມຄອງ** | 07 ສິງຫາ 2012 |
| **ອະນຸມັດ** | 06 ພະຈິກ 2012 |
| **ລົງທົບທວນໂຄງການຄັ້ງສຸດທ້າຍ** | – |

## ຂັ້ນຕອນການປະຕິບັດ

| ເລກທີອະນຸມັດ | ອະນຸມັດ | ລາຍເຊັນ | ການສ້າງຜົນໄດ້ຮັບ | ຄັ້ງສຸດທ້າຍ | | |
|---|---|---|---|---|---|---|
| | | | | ເບື້ອງຕົ້ນ | ປັບປຸງ | ຕົວຈິງ |
| ໂຄງການກູ້ຢືມ ເລກທີ 2931 | 06 ພະຈິກ 2012 | 04 ທັນວາ 2012 | 15 ມັງກອນ 2013 | 30 ມິຖຸນາ 2019 | – | – |

## ການປະຕິບັດ

| ວັນທີ | ເລກທີອະນຸມັດ | ເອດີບີ (ພັນໂດລາ) | ແຫລ່ງທຶນອື່ນໆ (ພັນໂດລາ) | ເປີເຊັນສຸດທິ |
|---|---|---|---|---|
| **ສັນຍາການໃຫ້ທຶນແບບທະວີຄູນ** | | | | |
| 31 ມີນາ 2013 | ໂຄງການ 2931 | 0 | 0 | 0,00% |
| **ການເບີກຈ່າຍແບບທະວີຄູນ** | | | | |
| 31 ມີນາ 2013 | ໂຄງການ 2931 | 0 | 0 | 0,00% |

## ■ ສະຖານະພາບຂອງຂໍ້ສັນຍາ

ຂໍ້ສັນຍາແມ່ນໄດ້ຈັດເປັນໝວດຕ່າງໆດັ່ງຕໍ່ໄປນີ້-ບັນຊີການເງິນໂຄງການທີ່ໄດ້ຮັບການກວດສອບ, ການປົກປ້ອງ, ດ້ານສັງຄົມ, ຂະແໜງການ, ດ້ານການເງິນ, ເສດຖະກິດ, ແລະ ອື່ນໆ. ການປະຕິບັດຂໍ້ສັນຍາແມ່ນໄດ້ຮັບການປະເມີນຈາກຂໍ້ສັນຍາໃນໝວດຕ່າງໆ ໂດຍການນໍາໃຊ້ມາດຖານດັ່ງລຸ່ມນີ: (i) ມີຄວາມເພິ່ງພໍໃຈ-ຂໍ້ສັນຍາທັງໝົດໃນໝວດດັ່ງກ່າວໄດ້ຮັບການປະຕິບັດ, ເງື່ອນໄຂສູງສຸດອັນໜຶ່ງຂອງຂໍ້ສັນຍາໄດ້ຮັບການອະນຸຍາດໃຫ້ຖືກຍົກເວັ້ນ, (ii) ພໍໃຈບາງສ່ວນ-ເງື່ອນໄຂສູງສຸດຂອງສອງຂໍ້ສັນຍາຢູ່ໃນໝວດດັ່ງກ່າວນັ້ນບໍ່ໄດ້ຮັບການປະຕິບັດ, (iii) ບໍ່ມີຄວາມພໍໃຈ-ຂໍ້ສັນຍາສາມຂໍ້ຫລືຫລາຍກວ່ານັ້ນຢູ່ໃນໝວດດັ່ງກ່າວບໍ່ໄດ້ຮັບການປະຕິບັດ. ອີງຕາມນະໂຍບາຍສື່ສານມວນຊົນປີ 2011, ການຈັດອັນດັບການປະຕິບັດສັນຍາສໍາລັບເອກະສານລາຍງານທາງການເງິນໂຄງການ ຈະໄດ້ປະຕິບັດໃນບັນດາໂຄງການທີ່ໄດ້ຮັບການເຈລະຈາໂຄງການພາຍຫລັງວັນທີ່ 2 ເມສາ 2012.

| ເລກທີອະນຸມັດ | ໝວດ | | | | | | |
|---|---|---|---|---|---|---|---|
| | ຂະແໜງການ | ສັງຄົມ | ການເງິນ | ເສດຖະກິດ | ອື່ນໆ | ການປົກປ້ອງ | ເອກະສານລາຍງານທາງການເງິນໂຄງການ |
| ໂຄງການກູ້ຢືມ 2931 | – | – | – | – | – | – | – |
| ໂຄງການຊ່ວຍເຫຼືອ ລ້າ 0313 | – | – | – | – | – | – | – |
| ໂຄງການຊ່ວຍເຫຼືອ ລ້າ 0314 | – | – | – | – | – | – | – |

## ■ ລາຍລະອຽດບ່ອນສອບຖາມ ແລະ ການປັບປຸງ

| | |
|---|---|
| **ພະນັກງານຮັບຜິດຊອບຂອງເອດີບີ** | ທ່ານ Florian M. Steinberg (fsteinberg@adb.org) |
| **ກົມຮັບຜິດຊອບຂອງເອດີບີ** | ກົມອາຊີຕາເວັນອອກສ່ຽງໃຕ້ |
| **ພະແນກຮັບຜິດຊອບຂອງເອດີບີ** | ພະແນັກພັດທະນາຕົວເມືອງແລະນໍ້າ |
| **ອົງການຈັດຕັ້ງປະຕິບັດ** | ກະຊວງໂຍທາທິການ ແລະ ຂົນສົ່ງ |

## ■ ເວັບໄຊ້ກ່ຽວກັບເອກະສານທີ່ກ່ຽວຂ້ອງ

| | |
|---|---|
| **ເວັບໄຊ້ໂຄງການ** | http://www.adb.org/projects/43319-022/main |
| **ລາຍການເອກະສານໂຄງການ** | http://www.adb.org/projects/43319-022/documents |